# ພຣູດຣີມ ໂພຣເທັກເຕີ

ປົກປ້ອງຄວາມຝັນຂອງທ່ານດ້ວຍຄວາມຄຸ້ມຄອງທີ່ສູງ
ແລະ ສາມາດຈ່າຍໄດ.

PRUDENTIAL

Listening. Understanding. Delivering.





## ທຸກຄົນສາມາດໄດ້ຮັບການຄຸ້ມຄອງຈາກປະກັນໄພຊີວິດໃນລາຄາທີ່ສາມາດຈ່າຍໄດ້

ບໍລິສັດ ພຣູເດັນໂຊລ໌, ພວກເຮົາເຊື່ອວ່າການຄຸ້ມຄອງປະກັນໄພຊີວິດແມ່ນສຳຄັນຕໍ່ທຸກຄົນ, ບໍ່ວ່າອາຍຸ, ລາຍໄດ້, ຫຼື ອາຊີບໃດກໍຕາມ. ພຣູດຣິມ ໂພຣເທັກເຕີ ເປັນພະລິດຕະພັນທີ່ອອກແບບມາເພື່ອທຸກຄົນ ແລະ ເປັນຜະລິດຕະພັນທີ່ທ່ານສາມາດຈ່າຍໄດ້ - ພຣູດຣິມ ໂພຣເທັກເຕີ ເປັນຜະລິດຕະພັນທີ່ໃຫ້ຄຸ້ມຄອງເທົ່ານັ້ນ ແລະ ພວກເຮົາມີວົງເງິນຄຸ້ມຄອງປະກັນທີ່ສູງສຳລັບຜູ້ຮັບການປະກັນ ມາພ້ອມຄ່າທຳນຽມປະກັນທີ່ຕໍ່າ. ຖ້າຫາກວ່າທ່ານກຳລັງຊອກຫາຜະລິດຕະພັນຄຸ້ມຄອງການເງິນທີ່ເໝາະສົມສຳລັບການເງິນຂອງທ່ານ, ຜະລິດຕະພັນນີ້ເປັນທາງເລືອກທີ່ດີທີ່ສຸດ.

ພວກເຮົາໄດ້ອອກແບບຜະລິດຕະພັນ ພຣູດຣິມ ໂພຣເທັກເຕີ ໃຫ້ງ່າຍ ແລະ ເຂົ້າໃຈງ່າຍທີ່ສຸດ!
ຕົວຢ່າງ: ຄ່າທຳນຽມປະກັນໄພ ແລະ ຜົນປະໂຫຍດທີ່ຄົງທີ່ ແລະ ຈະແຈ້ງ. ສະນັ້ນ, ທ່ານຮູ້ແລ້ວວ່າທ່ານຈະຕ້ອງໄດ້ຈ່າຍເທົ່າໃດ ແລະ ທ່ານຈະໄດ້ຮັບຜົນປະໂຫຍດອັນໃດແດ່. ນອກຈາກນັ້ນ, ທ່ານບໍ່ຈຳເປັນຕ້ອງກວດສຸຂະພາບກ່ອນຊື້ຜະລິດຕະພັນນີ້ ເຊິ່ງອຳນວຍຄວາມສະດວກ ແລະ ປະຫຍັດເວລາໃຫ້ທ່ານຫຼາຍຂຶ້ນ.

## ຜະລິດຕະພັນນີ້ເໝາະສົມກັບທ່ານບໍ່?

- ຖ້າຫາກວ່ານີ້ເປັນຄັ້ງທຳອິດທີ່ທ່ານຊື້ປະກັນໄພຊີວິດ, ຜະລິດຕະພັນນີ້ແມ່ນເໝາະສົມ ແລະ ເຂົ້າໃຈງ່າຍ.
- ເປົ້າໝາຍຫຼັກຂອງທ່ານແມ່ນເປັນເຈົ້າຂອງສັນຍາປະກັນໄພຊີວິດເພື່ອໃຫ້ຜົນປະໂຫຍດທາງການເງິນ ແກ່ຜູ້ທີ່ທ່ານຄຸ້ມຄອງ ໃນກໍລະນີເກີດເຫດບໍ່ຄາດຝັນຂຶ້ນ.
- ລາຍຈ່າຍປະຈຳເດືອນທີ່ຈຳເປັນຂອງທ່ານ (ຕົວຢ່າງ: ຄ່າເຊົ່າ, ອາຫານ, ເຄື່ອງບໍລິໂພກຕ່າງໆ) ທີ່ ລາຍຮັບສ່ວນໃຫຍ່ໃນແຕ່ລະເດືອນໝົດໄປກັບລາຍຈ່າຍເຫຼົ່ານີ້ ແລະ ທ່ານສາມາດເລີ່ມຈາກປະກັນໄພລະດັບພື້ນຖານໃນລາຄາທີ່ສາມາດຈ່າຍໄດ້.
- ທ່ານຍັງມີໜີ້ສິນຄົງຄ້າງ (ຕົວຢ່າງ: ການຜ່ອນເຮືອນ, ລົດ, ແລະ ການກູ້ຢືມເງິນທີ່ມີຫຼັກປະກັນ/ບໍ່ມີຫຼັກປະກັນ) ຊຶ່ງອາດຈະສົ່ງຜົນໃຫ້ຄອບຄົວຂອງທ່ານ ແລະ ຜູ້ທີ່ທ່ານຮັບຜິດຊອບ ຖ້າຫາກທ່ານເກີດເສຍຊີວິດ ແລະ ບໍ່ສາມາດຈ່າຍໄດ້.
- ຖ້າຫາກວ່າທ່ານກຳລັງຊອກຫາຜະລິດຕະພັນທີ່ຄ່າທຳນຽມຕໍ່າແຕ່ວົງເງິນຄຸ້ມຄອງສູງ.

ວົງເງິນຄ່າປະກັນສູງຖ້າທຽບໃສ່ຄ່າທຳນຽມປະກັນໄພທີ່ຕ້ອງຈ່າຍ

*[ສູງເຖິງ 72.000.000ກີບ ຂອງການຄຸ້ມຄອງຕໍ່ 10.000ກີບ ຂອງຄ່າທຳນຽມປະກັນໄພຕໍ່ປີ]*

ຄ່າທຳນຽມປະກັນໄພທີ່ສາມາດຈ່າຍເປັນລາຍເດືອນ ແລະ ລາຍປີໄດ້

ສັນຍາການປະກັນໄພທີ່ຫຼາກຫຼາຍ ແລະ ແທດເໝາະກັບຄວາມຕ້ອງການວາງແຜນທາງການເງິນ

ຄ່າທຳນຽມປະກັນໄພຈະຄົງທີ່ຕະຫຼອດອາຍຸສັນຍາປະກັນ

ຈະໄດ້ຮັບຜົນປະໂຫຍດສອງເທົ່າ ຫາກທ່ານເສຍຊີວິດ ຫຼື ພິການຖາວອນຈາກອຸປະຕິເຫດ

ບໍ່ຈຳເປັນກວດສຸຂະພາບ

*[ພຽງຕອບຄຳຖາມສຸຂະພາບຢູ່ໃນແບບຟອມເທົ່ານັ້ນ ຂຶ້ນກັບວົງເງິນປະກັນສູງສຸດ]*




**ການຈ່າຍຄ່າທຳນຽມປະກັນໄພປະຈຳປີ*

## ຮູບແບບຂອງຜະລິດຕະພັນ:

| | 15 | 10 |
|---|---|---|
| ສັນຍາການປະກັນໄພ/ ຄ່າທຳນຽມປະກັນໄພ/ ຜົນປະໂຫຍດຂອງສັນຍາ (ປີ) | 15 | 10 |
| ອາຍຸນັບຈາກວັນເກີດ ໃນມື້ອອກສັນຍາ | 18 – 49 | 18 – 49 |

## ຜົນປະໂຫຍດເມື່ອເສຍຊີວິດ/ພິການແບບຖາວອນ:

**100%** x ວົງເງິນປະກັນໄພທັງໝົດ

**200%** x ວົງເງິນປະກັນໄພທັງໝົດ

- ເມື່ອຜູ້ເອົາປະກັນໄພເສຍຊີວິດ/ພິການແບບຖາວອນ, ຜົນປະໂຫຍດທາງລຸ່ມນີ້ຈະຖືກຈ່າຍ
- ໃນກໍລະນີເສຍຊີວິດຈາກອຸປະຕິເຫດຜົນປະໂຫຍດຈະຖືກຈ່າຍເປັນສອງເທົ່າ

**25.000.000 ກີບ**

**ວົງເງິນຄຸ້ມຄອງຂັ້ນຕໍ່າສຸດ**

**100.000.000 ກີບ**

**ວົງເງິນຄຸ້ມຄອງຂັ້ນສູງສຸດ**

| | |
|---|---|
| ALB | ມື້ອອກສັນຍານັບຈາກວັນເກີດ |
| TPD | ພິການຖາວອນ |

**ສັນຍາຈະສິ້ນສຸດເມື່ອມີການຮ້ອງຂໍເງິນທົດແທນການເສຍຊີວິດ ຫຼື ພິການຖາວອນ.*

## ກໍລະນີສຶກສາ

**ທ້າວ ຄໍາຈັນ**

- ອາຍຸ 35ປີ / ເພດຊາຍ
- ໄດ້ຕັດສິນໃຈຊື້ຜະລິດຕະພັນ ພຣູດຣິມ ໂພຣເທັກເຕີ ໂດຍຄໍ້າປະກັນຊີວິດຕົວເອງ ເຊິ່ງມີລັກສະນະດັ່ງນີ້:

| ວົງເງິນຄຸ້ມຄອງທັງໝົດ | ໄລຍະສັນຍາ |
|---|---|
| **25.000.000 ກີບ** | **10 ປີ** |

## ຄ່າທໍານຽມທີ່ທ່ານຄໍາຈັນຕ້ອງຈ່າຍ

| ຮູບແບບການຈ່າຍເງິນທໍານຽມ | ລາຍເດືອນ | ລາຍປີ |
|---|---|---|
| ຄ່າທໍານຽມຕໍ່ປີ | **41.500 ກີບ** | **414.500 ກີບ** |

## ຜົນປະໂຫຍດທີ່ທ່ານຄໍາຈັນຈະໄດ້ຮັບ

**1**

ຖ້າຫາກທ້າວ ຄໍາຈັນເສຍຊີວິດ
ຫຼື ພິການຖາວອນທີ່
ບໍ່ໄດ້ເກີດຈາກອຸປະຕິເຫດ

- 12 ເດືອນທໍາອິດ: **414.500 ກີບ**
- ຫຼັງຈາກ 12 ເດືອນຂອງແຜນ: **25.000.000 ກີບ**

**2**

ຖ້າຫາກທ້າວ ຄໍາຈັນເສຍຊີວິດ
ຫຼື ພິການຖາວອນທີ່
ເກີດຈາກອຸປະຕິເຫດ

- **50.000.000 ກີບ**

# ຄຳຖາມທີ່ມັກຖືກຖາມ

**ຖ** ຂ້າພະເຈົ້າຕ້ອງກວດສຸຂະພາບກ່ອນຊື້ຜະລິດຕະພັນ ພຣູດຣີມ ໂພຣເທັກເຕີບໍ່?

**ຕ** ບໍ່, ບໍ່ມີການກວດສຸຂະພາບ ຍ້ອນວ່ານີ້ເປັນຜະລິດຕະພັນປະກັນໄພຄຸ້ມຄອງຊີວິດແບບງ່າຍດາຍ, ທ່ານພຽງແຕ່ຕອບຄຳຖາມກ່ຽວກັບສຸຂະພາບໃນແບບຟອມເທົ່ານັ້ນ.

**ຖ** ຈະເກີດຫຍັງຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ສາມາດຈ່າຍເງິນຄ່າທຳນຽມປະກັນໄພ?

**ຕ** ທ່ານຄວນສະໝັກຜະລິດຕະພັນນີ້ຖ້າທ່ານມີຄວາມສາມາດຈ່າຍຄ່າງວດປະກັນໄພທັງໝົດ. ຖ້າທ່ານບໍ່ຈ່າຍຄ່າທຳນຽມຕາມກຳນົດເວລາ, ທ່ານຈະໄດ້ຮັບການຜ່ອນຜັນ 30 ວັນໃນການຈ່າຍຄ່າທຳນຽມ ແລະ ຖ້າຄ່າປະກັນໄພຍັງບໍ່ຖືກຈ່າຍຫຼັງຈາກໄລຍະຜ່ອນຜັນ, ສັນຍາປະກັນໄພຂອງທ່ານຈະຂາດອາຍຸ ແລະ ທ່ານຈະສູນເສຍການຄຸ້ມຄອງຈາກສັນຍາ. ທ່ານອາດຈະຟື້ນສັນຍາຂອງທ່ານຄືນພາຍໃນໄລຍະເວລາຊາວສີ່ (24) ເດືອນນັບແຕ່ວັນຂາດອາຍຸສັນຍາໂດຍການຈ່າຍຄ່າປະກັນໄພທີ່ຄ້າງຈ່າຍທັງໝົດ ເພື່ອສືບຕໍ່ ການໄດ້ຮັບການຄຸ້ມຄອງຈາກສັນຍາ.

**ຖ** ຂ້າພະເຈົ້າສາມາດຍົກເລີກສັນຍາປະກັນໄພຊີວິດໄດ້ບໍ່?

**ຕ** ທ່ານສາມາດຍົກເລີກສັນຍາປະກັນໄພຊີວິດໄດ້ພາຍໃນ 30ວັນ ຫຼັງຈາກທີ່ທ່ານເຊັນຮັບສັນຍາການປະກັນໄພ. ຖ້າທ່ານຍົກເລີກສັນຍາໃນຊ່ວງເວລານີ້, ທ່ານຈະໄດ້ຮັບເງິນຄ່າທຳນຽມທີ່ທ່ານໄດ້ຈ່າຍຄືນຫຼັງຈາກຫັກຄ່າກວດສຸຂະພາບອື່ນໆ.

**ຕ** ຜະລິດຕະພັນ ພຣູດຣີມ ໂພຣເທັກເຕີແມ່ນຜະລິດຕະພັນຄຸ້ມຄອງຊີວິດເທົ່ານັ້ນ ເຊິ່ງໝາຍຄວາມວ່າຈະບໍ່ມີການສະສົມມູນ ຄ່າສັນຍາໃດໆ. ເມື່ອຍົກເລີກສັນຍາແລ້ວທ່ານຈະເສຍການຄຸ້ມຄອງປະກັນຊີວິດ ແລະ ບໍ່ມີການຄືນຄ່າທຳນຽມ. ຖ້າຫາກວ່າທ່ານຍົກເລີກສັນຍາ ແລ້ວຍື່ນຂໍປະກັນໄພໃໝ່ໃນອະນາຄົດ ອາດຈະເຮັດໄດ້ຍາກ ຫຼື ຄ່າທຳນຽມມີລາຄາແພງຂຶ້ນອີງຕາມອາຍຸ ແລະ ຕາມເງື່ອນໄຂທາງດ້ານການແພດ.

# ກ່ຽວກັບພວກເຮົາ

ບໍລິສັດ ພຣູເດັນໂຊລ໌ ຖືກສ້າງຕັ້ງຂຶ້ນທີ່ເມືອງລອນດອນປະເທດອັງກິດ ໃນປີ 1848 ເຊິ່ງມີອາຍຸຫຼາຍກວ່າ 170 ປີ ແລະ ພວກເຮົາເປັນໜຶ່ງໃນບໍລິສັດປະກັນໄພທີ່ມີປະຫວັດສາດຍາວນານທີ່ສຸດ.

ບໍລິສັດ ພຣູເດັນໂຊລ໌ ດຳເນີນທຸລະກິດໃນ 15 ປະເທດໃນອາຊີ ແລະ ໄດ້ຮັບການໄວ້ວາງໃຈຈາກລູກຄ້າຫຼາຍ 16 ລ້ານຄົນໃນພາກພື້ນ.

ບໍລິສັດ ພຣູເດັນໂຊລ໌ ມີສຳນັກງານໃຫຍ່ທີ່ລອນດອນ ປະເທດອັງກິດ ແລະ ຮົງກົງ ແລະ ຖືກຈົດທະບຽນເຂົ້າຕະຫຼາດຫຼັກຊັບຢູ່ທີ່ລອນດອນ ແລະ ຮົງກົງ.

ພຣູເດັນໂຊລ໌ ຄໍອອບໂປເຣເຊິນ ເອເຊຍ ເປັນເຈົ້າຂອງ ພຣູເດັນໂຊລ໌ ລາວ ແຕ່ພຽງຜູ້ດຽວ. ພວກເຮົາໄດ້ເປີດຫ້ອງການຕົວແທນຂອງພວກເຮົາທີ່ ນະຄອນຫຼວງວຽງຈັນ ໃນ ປີ 2015 ແລະ ໄດ້ຮັບໃບອະນຸຍາດການດຳເນີນທຸລະກິດຈາກກະຊວງການເງິນໃນເດືອນ ເມສາ 2016. ພວກເຮົາໄດ້ນຳເອົາຜະລິດຕະພັນປະກັນໄພຊີວິດທີ່ແທດເໝາະກັບ ຄວາມຕ້ອງການໃນການຄຸ້ມຄອງ ແລະ ການສະສົມ ທຶນທາງການເງິນສຳລັບຄົນລາວ. ໃນປະຈຸບັນ, ບໍລິສັດ ພຣູເດັນໂຊລ໌ ລາວ ໄດ້ຈຳໜ່າຍຜະລິດຕະພັນ ແລະ ການບໍລິການຜ່ານເຄືອຂ່າຍທະນາຄານຄູ່ຮ່ວມທຸລະກິດທີ່ມີຊື່ສຽງທົ່ວປະເທດ, ຜ່ານລະບົບຂາຍກົງ, ລວມໄປເຖິງການຈຳໜ່າຍ ຜະລິດຕະພັນຜ່ານເທິງແອບພລິເຄເຊິນເພົ້າສ໌ອີກດ້ວຍ.